ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 01 /ລບ

ນະຄອນຫຼວງວຽງຈັນ, ວັນທີ 6.1.2015

# ດຳລັດ

## ວ່າດ້ວຍການຕິດຕາມ ກວດກາໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍການກວດກາລັດ ສະບັບເລກທີ 02/ສພຊ, ລົງວັນທີ 02 ກໍລະກົດ 2007;
- ອີງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 08/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມໜັງສືສະເໜີ ຂອງປະທານອົງການກວດກາລັດຖະບານ ສະບັບເລກທີ 286/ອກລ, ລົງວັນທີ 07 ພະຈິກ 2014.

## ລັດຖະບານ ອອກດຳລັດ:

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະມາດຕະການ ໃນການຕິດຕາມ ກວດກາ ໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ເພື່ອປ້ອງກັນການລະເມີດກົດໝາຍ, ລະບຽບການ ແລະພຶດຕິກຳອື່ນ ທີ່ເປັນການສໍ້ລາດບັງຫຼວງ ແນໃສ່ເຮັດໃຫ້ໂຄງການລົງທຶນຂອງລັດ ໄດ້ຮັບການປະຕິບັດ ດ້ວຍຄວາມໂປ່ງ ໃສ, ປະຢັດ ແລະມີປະສິດທິຜົນສູງ.

### ມາດຕາ 2 ການຕິດຕາມ ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ

ການຕິດຕາມ ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ແມ່ນການຕິດຕາມ ກວດກາປົກ ກະຕິຕໍ່ຜູ້ປະຕິບັດໂຄງການ ເພື່ອໃຫ້ຮູ້, ເຫັນ ແລະກຳໄດ້ສະພາບການ, ຂໍ້ມູນໃນການຈັດຕັ້ງປະຕິບັດໂຄງ ການລົງທຶນຂອງລັດ ນັບແຕ່ເລີ່ມຕົ້ນໂຄງການເປັນຕົ້ນໄປ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ປະຕິບັດໂຄງການ ໝາຍເຖິງ ເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ, ຜູ້ຄຸ້ມຄອງ ແລະນຳໃຊ້ໂຄງການ, ບໍລິສັດທີ່ປຶກສາໂຄງການ ແລະຜູ້ຮັບເໝົາໂຄງການ;

2. ຄະນະຕິດຕາມ ກວດກາ ໝາຍເຖິງພະນັກງານກວດກາ ທີ່ສັງກັດຢູ່ອົງການກວດກາລັດ ແລະມາຈາກພາກສ່ວນທີ່ກ່ຽວຂ້ອງແຕ່ລະຂັ້ນ ທີ່ຖືກແຕ່ງຕັ້ງມອບໝາຍໃຫ້ປະຕິບັດໜ້າທີ່ ຕິດຕາມ ກວດກາ ການປະຕິບັດໂຄງການລົງທຶນຂອງລັດ.

**ມາດຕາ 4 ຫຼັກການຕິດຕາມ ກວດກາໂຄງການລົງທຶນຂອງລັດ ເລີ່ມແຕ່ທ້ອງຖິ່ນ**

ການຕິດຕາມ, ກວດກາໂຄງການລົງທຶນຂອງລັດ ເລີ່ມແຕ່ທ້ອງຖິ່ນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມກົດໝາຍ ແລະລະບຽບການຢ່າງເຂັ້ມງວດ;

2. ເປີດເຜີຍ, ມີປະຊາທິປະໄຕ, ພາວະວິໄສ, ຊັດເຈນ, ຍຸຕິທຳ, ທັນເວລາ ແລະມີຄວາມໂປ່ງໃສ;

3. ມີສ່ວນຮ່ວມ ຂອງອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະປະຊາຊົນ;

4. ບໍ່ສ້າງຄວາມຫຍຸ້ງຍາກທີ່ບໍ່ຈຳເປັນ ໃຫ້ແກ່ການເຄື່ອນໄຫວວຽກງານປົກກະຕິ ຂອງຜູ້ປະຕິບັດໂຄງການ;

5. ປະສານສົມທົບ, ປຶກສາຫາລື ກັບຜູ້ປະຕິບັດໂຄງການ ແລະພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມ ກວດກາ ແລະແກ້ໄຂຜົນຂອງການຕິດຕາມ ກວດກາຢ່າງກົມກຽວ ແລະເຂັ້ມງວດ.

**ມາດຕາ 5 ໂຄງການລົງທຶນຂອງລັດທີ່ຕ້ອງຕິດຕາມ ກວດກາເລີ່ມແຕ່ທ້ອງຖິ່ນ**

ໂຄງການລົງທຶນຂອງລັດທີ່ຕ້ອງຕິດຕາມ ກວດກາເລີ່ມແຕ່ທ້ອງຖິ່ນ ແມ່ນໂຄງການລົງທຶນຂອງລັດທຸກປະເພດທີ່ນຳໃຊ້ງົບປະມານແຫ່ງລັດ, ທຶນສົມທົບ, ທຶນຊ່ວຍເຫຼືອລ້າ ແລະທຶນກູ້ຢືມຈາກພາຍໃນ ຫຼືຕ່າງປະເທດ ໂດຍມີການເລືອກເຟັ້ນ ແລະມີຈຸດສຸມ.

## ໝວດທີ 2

## ເນື້ອໃນ, ຂັ້ນຕອນ ແລະວິທີການ ດຳເນີນການຕິດຕາມ ກວດກາ

**ມາດຕາ 6 ເນື້ອໃນການຕິດຕາມ ກວດກາ**

ເນື້ອໃນການຕິດຕາມ ກວດກາ ມີດັ່ງນີ້:

1. ຕິດຕາມ ກວດກາ ໄລຍະເລີ່ມຕົ້ນໂຄງການ:

1.1. ເກັບກຳ ແລະສຶກສາຄົ້ນຄວ້າຂໍ້ມູນ, ຫຼັກຖານ ແລະເອກະສານຕ່າງໆ ກ່ຽວກັບໂຄງການລົງທຶນຂອງລັດຄື ບົດສະເໜີໂຄງການ ແລະສຳຫຼວດ-ອອກແບບຄິດໄລ່, ບົດສຶກສາຄວາມເປັນໄປໄດ້ຂອງໂຄງການ, ບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມທາງສັງຄົມ ແລະທຳມະຊາດ, ເອກະສານການປະມູນ, ສັນຍາຮັບເໝົາໂຄງການ ແລະເອກະສານສຳຄັນອື່ນ;

1.2. ລົງສະຖານທີ່ກໍ່ສ້າງໂຄງການ, ເກັບກໍາ ແລະຄົ້ນຄວ້າບັນດາຂໍ້ມູນ, ຫຼັກຖານ, ທາງສຽງ ແລະຄໍາສະເໜີທີ່ພົວພັນເຖິງໂຄງການລົງທຶນຂອງລັດ ຈາກການຈັດຕັ້ງທີ່ກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ແລະປະຊາຊົນ ທີ່ດໍາລົງຊີວິດຢູ່ໃນຂອບເຂດທີ່ໂຄງການຕັ້ງຢູ່;

2. ຕິດຕາມ ກວດກາໄລຍະການຈັດຕັ້ງປະຕິບັດໂຄງການຕົວຈິງ:

2.1. ການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ;

2.2. ການຈັດຕັ້ງປະມູນໂຄງການລົງທຶນຂອງລັດ ແລະການຮັບຮອງເອົາຜູ້ຊະນະການປະມູນ;

2.3. ການປະຕິບັດສັນຍາຮັບເໝົາໂຄງການ ແລະການດໍາເນີນງານຕົວຈິງແຕ່ລະໄລຍະຂອງຜູ້ປະຕິບັດໂຄງການ :

- ການປະຕິບັດໜ້າທີ່, ຂອບເຂດສິດ ຂອງເຈົ້າຂອງໂຄງການ;
- ການປະຕິບັດໜ້າທີ່, ຂອບເຂດສິດ ຂອງຄະນະຮັບຜິດຊອບໂຄງການ;
- ການປະຕິບັດໜ້າທີ່, ຂອບເຂດສິດ ຂອງບໍລິສັດທີ່ປຶກສາໂຄງການ;
- ການປະຕິບັດໜ້າທີ່, ຂອບເຂດສິດ ຂອງຜູ້ຮັບເໝົາໂຄງການ.

3. ການຕິດຕາມ ກວດກາໄລຍະສໍາເລັດ ແລະກະກຽມມອບ-ຮັບໂຄງການ:

3.1. ກວດກາຄືນບໍລິມາດວຽກ, ມາດຕະຖານເຕັກນິກ ແລະຄຸນນະພາບຂອງໂຄງການ ຕາມທີ່ໄດ້ກໍານົດໄວ້ໃນສັນຍາຮັບເໝົາໂຄງການ;

3.2. ການຊໍາລະສະສາງມູນຄ່າໂຄງການ;

3.3. ການປະຕິບັດພັນທະຕ່າງໆ.

**ມາດຕາ 7 ຂັ້ນຕອນດໍາເນີນການຕິດຕາມ ກວດກາ**

ການຕິດຕາມ ກວດກາຈະໄດ້ດໍາເນີນຕາມສາມຂັ້ນຕອນດັ່ງນີ້:

ກ. ຂັ້ນຕອນການກະກຽມ ລວມມີບັນດາວຽກ ດັ່ງນີ້:

1. ອົງການກວດກາລັດຖະບານ ແຕ່ງຕັ້ງຄະນະຕິດຕາມ ກວດກາ ໂດຍມີພະນັກງານວິຊາການ ທີ່ມາຈາກອົງການກວດກາ ຫຼື ມາຈາກບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອດໍາເນີນການຕິດຕາມກວດກາໂຄງການລົງທຶນຂອງລັດທີ່ຂຶ້ນກັບການຄຸ້ມຄອງໂດຍກົງຂອງລັດຖະບານ, ຖ້າແມ່ນໂຄງການໃຫຍ່ລະດັບຊາດທີ່ມີຄວາມສ່ຽງສູງ ແລະພົວພັນກັບຫຼາຍຂະແໜງການ ແມ່ນນາຍົກລັດຖະມົນຕີ ເປັນຜູ້ແຕ່ງຕັ້ງ.

ກົມກວດກາກະຊວງ, ອົງການ, ພະແນກກວດກາລັດແຂວງ, ນະຄອນຫລວງ ແລະຫ້ອງການກວດກາລັດເມືອງແຕ່ງຕັ້ງຄະນະຕິດຕາມ ກວດກາ ໂດຍມີພະນັກງານທີ່ມາຈາກຂະແໜງກວດກາ ຫຼື ມາຈາກຂະແໜງການກ່ຽວຂ້ອງ ເພື່ອດໍາເນີນການຕິດຕາມ ກວດກາໂຄງການລົງທຶນຂອງລັດທີ່ຂຶ້ນກັບການຄຸ້ມຄອງໂດຍກົງຂອງຕົນ, ຖ້າແມ່ນໂຄງການໃຫ່ຍລະດັບກະຊວງ, ແຂວງ, ນະຄອນຫລວງ ແລະເມືອງ ທີ່ພົວພັນກັບຫຼາຍພາກສ່ວນແມ່ນລັດຖະມົນຕີ, ຫົວໜ້າອົງການ, ເຈົ້າແຂວງ, ເຈົ້າຄອງນະຄອນຫລວງ ແລະເຈົ້າເມືອງ ເປັນຜູ້ແຕ່ງຕັ້ງຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

2. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແຈ້ງຂໍ້ຕົກລົງ ວ່າດ້ວຍການໃຫ້ຕິດຕາມກວດກາໂຄງການ, ເກັບກໍາຂໍ້ມູນ, ເອກະສານຕ່າງໆ ກ່ຽວກັບໂຄງການ ທີ່ເປັນເປົ້າໝາຍຕິດຕາມ ກວດ

ກາ, ລົງເລິກເກັບກຳສະພາບການຢູ່ພື້ນທີ່ດຳເນີນໂຄງການ, ຄົ້ນຄວ້າກຳແໜ້ນລະບຽບ, ກົດໝາຍ ແລະເອກະສານສຳຄັນອື່ນ ເພື່ອສ້າງແຜນການດຳເນີນງານຕິດຕາມ ກວດກາໂຄງການ;

3. ສ້າງແຜນການເຄື່ອນໄຫວຕິດຕາມ ກວດກາ, ອອກລະບຽບການສະເພາະສຳລັບຄະນະຕິດຕາມ ກວດກາ, ຈັດຕັ້ງ ແລະແນະນຳພະນັກງານ ທີ່ຖືກແຕ່ງຕັ້ງໄປຕິດຕາມ ກວດກາ ໃຫ້ກຳແໜ້ນຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນຂອງການຕິດຕາມ ກວດກາ ແລະກຳແໜ້ນລະບຽບການຂອງຄະນະຕິດຕາມ ກວດກາ ພ້ອມທັງແບ່ງຄວາມຮັບຜິດຊອບໃຫ້ແຕ່ລະຄົນຢ່າງຈະແຈ້ງ;

4. ກະກຽມງົບປະມານ, ພາຫະນະ, ອຸປະກອນຮັບໃຊ້ວິຊາສະເພາະສຳລັບການເຄື່ອນໄຫວວຽກງານຕິດຕາມ ກວດກາ.

ຂ. ຂັ້ນຕອນດຳເນີນການຕິດຕາມ ກວດກາ ໃຫ້ປະຕິບັດ ດັ່ງນີ້:

1. ແຈ້ງແຜນການຕິດຕາມ ກວດກາ ໃຫ້ເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ, ບໍລິສັດທີ່ປຶກສາ ແລະຜູ້ຮັບເໝົາໂຄງການຮັບຊາບ, ປຶກສາຫາລື ເພື່ອເປັນເອກະພາບ ແລະສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ຄະນະຕິດຕາມ ກວດກາ ໄດ້ເຄື່ອນໄຫວປະຕິບັດໜ້າທີ່ຕາມແຜນການທີ່ວາງໄວ້;

2. ດຳເນີນການຕິດຕາມ ກວດກາ ຕາມແຜນການ ເປັນຕົ້ນ ສະເໜີໃຫ້ຜູ້ປະຕິບັດໂຄງການລາຍງານເປັນລາຍລັກອັກສອນ, ຮັບຟັງການລາຍງານເພີ່ມເຕີມ ໂດຍມີການເຈາະຈີ້ມຊັກຖາມ, ບັນທຶກການລາຍງານ, ການມອບ-ຮັບເອກະສານ, ລົງສຳພາດ, ຮັບຟັງການລາຍງານຂອງກຳມະກອນ, ນັກຊ່ຽວຊານປະຈຳໂຄງການ, ອົງການປົກຄອງທ້ອງຖິ່ນ ທີ່ໂຄງການຕັ້ງຢູ່ ແລະຄອບຄົວປະຊາຊົນ ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ;

3. ເຂົ້າຮ່ວມຮັບຟັງ ແລະຕິດຕາມການແນະນຳການປະມູນ, ການຈັດຕັ້ງການປະມູນ, ການຕົກລົງ ຫຼື ຮັບຮອງເອົາຜູ້ຊະນະການປະມູນ ຂອງຄະນະຮັບຜິດຊອບໂຄງການ ຫຼືເຈົ້າຂອງໂຄງການ;

4. ກວດກາເອກະສານໂຄງການ, ມາດຕະຖານເຕັກນິກ, ຊະນິດ, ຄຸນນະພາບ, ຫົວໜ່ວຍລາຄາໃນການຈັດຊື້ພາຫະນະ, ອຸປະກອນເຕັກນິກ, ວັດສະດຸກໍ່ສ້າງ ແລະຫົວໜ່ວຍລາຄາອື່ນໆ ຂອງການກໍ່ສ້າງ;

5. ພ້ອມກັບເຈົ້າຂອງໂຄງການ ແລະຜູ້ປະຕິບັດໂຄງການ ລົງຕິດຕາມ ກວດກາບັນດາກິດຈະການ ຫຼື ໜ້າວຽກຢູ່ພາກສະໜາມຂອງໂຄງການແຕ່ລະໄລຍະ;

6. ເຊີນຜູ້ປະຕິບັດໂຄງການມາລາຍງານ, ອະທິບາຍ, ຊີ້ແຈງບັນຫາທີ່ຍັງບໍ່ທັນແຈ້ງ.

ຄ. ການສະຫຼຸບຜົນການຕິດຕາມ ກວດກາແຕ່ລະໄລຍະ ໃຫ້ປະຕິບັດ ດັ່ງນີ້:

1. ສັງລວມບັນດາເອກະສານ, ຂໍ້ມູນ, ຫຼັກຖານ, ບົດບັນທຶກການລາຍງານ, ບົດບັນທຶກການກວດກາໜ້າວຽກຕ່າງໆ;

2. ຕີລາຄາ, ໃຈ້ແຍກໃຫ້ເຫັນດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ຂອງຜູ້ປະຕິບັດໂຄງການ, ບັນດາໜ້າວຽກຂອງໂຄງການ ແລະສະເໜີວິທີການແກ້ໄຂ;

3. ຜ່ານບົດສະຫຼຸບການຕິດຕາມ ກວດກາພາຍໃນຄະນະຕິດຕາມ ກວດກາ ເພື່ອເປັນເອກະພາບແລ້ວສົ່ງບົດສະຫຼຸບດັ່ງກ່າວໃຫ້ຜູ້ປະຕິບັດໂຄງການ ຫຼື ເປົ້າໝາຍທີ່ໄດ້ຕິດຕາມ ກວດກາມີຄຳເຫັນຢັ້ງຢືນພາຍໃນສິບຫ້າວັນ. ຈາກນັ້ນ, ຄະນະຕິດຕາມ ກວດກາ ຜູ້ປະຕິບັດໂຄງການ ແລະການຈັດຕັ້ງຂັ້ນເທິງຂອງເປົ້າໝາຍຕິດຕາມ ກວດກາ ລົງລາຍເຊັນຢັ້ງຢືນຜົນການຕິດຕາມ ກວດກາ, ສົ່ງບົດສະຫຼຸບລາຍງານ

ໃຫ້ຜູ້ອອກຂໍ້ຕົກລົງໃຫ້ຕິດຕາມ ກວດກາໂຄງການ ເພື່ອພິຈາລະນາ ແລະໃຫ້ການຊີ້ນຳແກ້ໄຂຜົນຂອງການຕິດຕາມ ກວດກາໃຫ້ທັນເວລາ.

**ມາດຕາ 8 ວິທີການຕິດຕາມ ກວດກາ**

ວິທີການຕິດຕາມ ກວດກາ ໃຫ້ປະຕິບັດ ດັ່ງນີ້:

1. ນັບແຕ່ໄລຍະເລີ່ມຕົ້ນໂຄງການ ຄະນະຕິດຕາມ ກວດກາ ຕ້ອງໃກ້ຊິດຕິດແທດກັບເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ, ບໍລິສັດທີ່ປຶກສາໂຄງການ, ຜູ້ຮັບເໝົາໂຄງການ ແລະປະຊາຊົນໃນບໍລິເວນທີ່ໂຄງການຕັ້ງຢູ່ ເພື່ອຮູ້ ແລະກຳໄດ້ສະພາບການ, ຂໍ້ມູນ ແລະເອກະສານຕ່າງໆກ່ຽວກັບໂຄງການ;

2. ລົງຕິດຕາມ ກວດກາ ຢູ່ສະຖານທີ່ດຳເນີນໂຄງການເປັນແຕ່ລະໄລຍະ;

3. ເຂົ້າຮ່ວມປຶກສາຫາລື ແລະສະເໜີຄຳເຫັນຕໍ່ຜູ້ປະຕິບັດໂຄງການ ກ່ຽວກັບບັນຫາທີ່ເຫັນວ່າຈະສົ່ງຜົນກະທົບທາງລົບ ເປັນຕົ້ນ ການປະຕິບັດໂຄງການບໍ່ຖືກຕາມການສຳຫຼວດ-ອອກແບບ, ຕາມສັນຍາ, ຕາມມາດຕະຖານເຕັກນິກ ແລະອື່ນໆ ທີ່ໄດ້ກຳນົດໄວ້;

4. ຮ່ວມກັບເຈົ້າຂອງໂຄງການ ແລະຄະນະຮັບຜິດຊອບໂຄງການ ກວດກາການປະຕິບັດໂຄງການ ກ່ອນການມອບ-ຮັບ.

## ໝວດທີ 3
## ອົງການຮັບຜິດຊອບການຕິດຕາມ ກວດກາ ໂຄງການລົງທຶນຂອງລັດເລີ່ມແຕ່ທ້ອງຖິ່ນ

**ມາດຕາ 9 ອົງການຮັບຜິດຊອບ**

ອົງການຮັບຜິດຊອບການຕິດຕາມ ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ທ້ອງຖິ່ນ ປະກອບດ້ວຍ:

- ອົງການກວດກາລັດຖະບານ;
- ກົມກວດກາ ຂອງກະຊວງ, ອົງການ;
- ພະແນກກວດກາລັດ ຂອງແຂວງ, ນະຄອນ;
- ຫ້ອງການກວດກາ ຂອງເມືອງ, ເທດສະບານ;
- ຂະແໜງກວດກາລັດ ຂອງບັນດາພະແນກການອ້ອມຂ້າງແຂວງ, ນະຄອນ.

**ມາດຕາ 10 ແບ່ງຄວາມຮັບຜິດຊອບ ໃນການຕິດຕາມ ກວດກາ**

ໃນການຕິດຕາມ ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ທ້ອງຖິ່ນ ແບ່ງຄວາມຮັບຜິດຊອບ ດັ່ງນີ້ :

1. ອົງການກວດກາລັດຖະບານ ຕິດຕາມ ກວດກາໂຄງການລົງທຶນຂອງລັດທຸກປະເພດທີ່ຂຶ້ນກັບການຄຸ້ມຄອງໂດຍກົງຂອງລັດຖະບານ, ພ້ອມກັນນັ້ນກໍເຂົ້າຮ່ວມຕິດຕາມ ກວດກາໂຄງການລົງທຶນຂອງລັດ ທີ່ຂຶ້ນກັບການຄຸ້ມຄອງຂອງກະຊວງ, ອົງການ ແລະທ້ອງຖິ່ນ ຕາມການມອບໝາຍຂອງລັດຖະບານ ແລະນາຍົກລັດຖະມົນຕີ;

2. ກົມກວດກາບັນດາກະຊວງ, ອົງການ ຕິດຕາມ ກວດກາໂຄງການລົງ ທຶນຂອງລັດທຸກປະເພດ ທີ່ຂຶ້ນກັບການຄຸ້ມຄອງໂດຍກົງຂອງກະຊວງ, ອົງການຕົນ ແລະເຂົ້າຮ່ວມຕິດຕາມ ກວດກາໂຄງການລົງທຶນຂອງລັດ ໃນຂະແໜງການຂອງຕົນຢູ່ທ້ອງຖິ່ນຕາມການມອບໝາຍ ຂອງລັດຖະມົນຕີ, ຫົວໜ້າອົງການ;

3. ພະແນກກວດກາລັດ ແຂວງ, ນະຄອນ ຕິດຕາມ ກວດກາໂຄງການລົງທຶນຂອງລັດທຸກປະເພດ ທີ່ຂຶ້ນກັບການຄຸ້ມຄອງໂດຍກົງຂອງແຂວງ, ນະຄອນ ແລະເຂົ້າຮ່ວມຕິດຕາມ ກວດກາໂຄງການລົງທຶນອື່ນຕາມການມອບໝາຍຂອງລັດຖະບານ, ນາຍົກລັດຖະມົນຕີ ແລະເຈົ້າແຂວງ, ເຈົ້າຄອງນະຄອນຫລວງ;

4. ຫ້ອງການກວດກາລັດຂັ້ນເມືອງ ຕິດຕາມ ກວດກາໂຄງການລົງທຶນຂອງລັດທຸກປະເພດ ທີ່ຂຶ້ນກັບການຄຸ້ມຄອງໂດຍກົງຂອງເມືອງ ແລະເຂົ້າຮ່ວມຕິດຕາມ ກວດກາໂຄງການລົງທຶນອື່ນຂອງລັດ ຕາມການມອບໝາຍຂອງເຈົ້າແຂວງ, ເຈົ້າຄອງນະຄອນຫລວງ ແລະເຈົ້າເມືອງ;

5. ຂະແໜງກວດກາລັດບັນດາພະແນກການຂອງແຂວງ, ນະຄອນ ຕິດຕາມ ກວດກາໂຄງການລົງທຶນຂອງລັດທຸກປະເພດ ທີ່ຂຶ້ນກັບການຄຸ້ມຄອງໂດຍກົງ ຂອງພະແນກການ ແລະຕິດຕາມ ກວດກາໂຄງການລົງທຶນອື່ນຂອງລັດ ຕາມການມອບໝາຍຈາກກະຊວງ, ອົງການທຽບເທົ່າ, ແຂວງແລະນະຄອນຫລວງ;

**ມາດຕາ 11 ໜ້າທີ່ ແລະ ຂອບເຂດສິດ ຂອງອົງການຮັບຜິດຊອບຕິດຕາມ ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ທ້ອງທີ່**

ອົງການຮັບຜິດຊອບຕິດຕາມ ກວດກາໂຄງການລົງທຶນຂອງລັດແຕ່ລະຂັ້ນມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນທິດທາງແຜນພັດທະນາເສດຖະກິດ-ສັງຄົມ, ບັນດາກົດໝາຍ ແລະລະບຽບການ ກ່ຽວກັບການລົງທຶນຂອງລັດ, ຍຶດໝັ້ນ ແລະປະຕິບັດຕາມກົດໝາຍ ແລະລະບຽບການໃຫ້ຖືກຕ້ອງ ແລະເຂັ້ມງວດ;

2. ຕົກລົງ ຫຼື ສະເໜີຂັ້ນເທິງຖັດຕົນ ພິຈາລະນາຕົກລົງດຳເນີນການຕິດຕາມ ກວດກາໂຄງການລົງທຶນຂອງລັດແບບປົກກະຕິ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ແລະພິຈາລະນາຕົກລົງແຕ່ງຕັ້ງຄະນະຕິດຕາມ ກວດກາ ເພື່ອດຳເນີນການກວດກາ ໃນເມື່ອມີການຮ້ອງຟ້ອງ, ການສະເໜີ, ການລາຍງານ ແລະມີປາກົດການລະເມີດກົດໝາຍ ແລະລະບຽບການ;

3. ຕິດຕາມ ກວດກາໂຄງການລົງທຶນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະຕາມການມອບໝາຍ;

4. ອົງການຮັບຜິດຊອບການຕິດຕາມ ກວດກາຂັ້ນເທິງໃຫ້ການແນະນຳ ຕິດຕາມ, ຊຸກຍູ້ອົງການຕິດຕາມ ກວດກາຂັ້ນລຸ່ມໃຫ້ປະຕິບັດການຕິດຕາມ ກວດກາໂຄງການລົງທຶນຂອງລັດ ແບບປົກກະຕິ ແລະເຂົ້າຮ່ວມການຕິດຕາມ ກວດກາໂຄງການໃດໜຶ່ງຕາມການຕົກລົງຂອງຂັ້ນເທິງ;

5. ພົວພັນ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ລວມທັງອົງການແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະປະຊາຊົນ ເພື່ອເຄື່ອນໄຫວວຽກງານຕິດຕາມ ກວດກາໂຄງການລົງທຶນຂອງລັດ;

6. ເຊີນຜູ້ປະຕິບັດໂຄງການ ແລະຂະແໜງການທີ່ກ່ຽວຂ້ອງມາລາຍງານ, ຊີ້ແຈງ ແລະສະໜອງຂໍ້ມູນ, ຫຼັກຖານກ່ຽວກັບໂຄງການທີ່ເປັນເປົ້າໝາຍຕິດຕາມ ກວດກາ;

7. ຈັດກອງປະຊຸມປຶກສາຫາລືກັບຜູ່ປະຕິບັດໂຄງການ ເພື່ອຄວາມເປັນເອກະພາບ ໃນການປັບປຸງແກ້ໄຂບັນຫາຕ່າງໆ ທີ່ເຫັນວ່າເປັນການລະເມີດກົດໝາຍ, ລະບຽບການ, ມາດຕະຖານເຕັກນິກ ແລະສັນຍາ;

8. ສະເໜີໃຫ້ການຈັດຕັ້ງຂັ້ນເທິງທີ່ກ່ຽວຂ້ອງພິຈາລະນາປັບປຸງແກ້ໄຂກິດຈະການ ຫຼື ໜ້າວຽກໃດໜຶ່ງ ຂອງໂຄງການທີ່ເຫັນວ່າຈຳເປັນ;

9. ສະເໜີຂັ້ນເທິງພິຈາລະນາໂຈະ ຫຼື ຍົກເລີກໜ້າວຽກໃດໜຶ່ງ ຫຼື ທັງໝົດໂຄງການລົງທຶນຂອງລັດ ທີ່ບໍ່ມີປະສິດທິຜົນ, ບໍ່ຖືກມາດຕະຖານເຕັກນິກ, ແຕະຕ້ອງເຖິງຄວາມສະຫງົບປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຄວາມໝັ້ນຄົງຂອງຊາດ, ມີຜົນກະທົບຕໍ່ສະພາບແວດລ້ອມທຳມະຊາດ ແລະສັງຄົມຢ່າງຮ້າຍແຮງ, ສ້າງຜົນເສຍຫາຍອັນໃຫຍ່ຫຼວງຕໍ່ສິດ ແລະຜົນປະໂຫຍດຂອງຊາດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ;

10. ສະຫຼຸບ ແລະລາຍງານຜົນການຕິດຕາມ ກວດກາ ແລະຂໍຄຳເຫັນຊີ້ນຳ ຈາກຂັ້ນເທິງຂອງຕົນ ເພື່ອພິຈາລະນາແກ້ໄຂຜົນການຕິດຕາມ ກວດກາ ພ້ອມທັງຕິດຕາມການແກ້ໄຂຜົນການ ຕິດຕາມ ກວດກາຂອງຂະແໜງການກ່ຽວຂ້ອງ;

11. ນຳໃຊ້ສິດ ແລະໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະຕາມການມອບໝາຍຂອງການຈັດຕັ້ງຂັ້ນເທິງ.

**ມາດຕາ 12 ໜ້າທີ່ ແລະຂອບເຂດສິດ ຂອງຄະນະຕິດຕາມ ກວດກາ**

ຄະນະຕິດຕາມ ກວດກາມີໜ້າທີ່ ແລະສິດ ດັ່ງນີ້:

1. ແຈ້ງຂໍ້ຕົກລົງກ່ຽວກັບການຕິດຕາມ ກວດກາ ແລະແຜນການຕິດຕາມ ກວດກາໃຫ້ຜູ້ຖືກກວດກາຊາບ ແລະມີການປຶກສາຫາລືເປັນເອກະພາບກັບຜູ້ປະຕິບັດໂຄງການ;

2. ດຳເນີນການຕິດຕາມ ກວດກາໂຄງການລົງທຶນຂອງລັດ ຕາມການຕົກລົງມອບໝາຍຂອງການຈັດຕັ້ງ, ປະຕິບັດໜ້າທີ່ຕິດຕາມ ກວດກາຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນແຜນການດຳເນີນງານ, ເຄົາລົບ ແລະເຮັດຖືກຕາມກົດໝາຍ, ລະບຽບການ;

3. ສະເໜີໃຫ້ເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ, ບໍລິສັດທີ່ປຶກສາໂຄງການ, ຜູ້ຮັບເໝົາໂຄງການ ແລະຜູ້ຄຸ້ມຄອງໂຄງການລາຍງານ, ສະໜອງຂໍ້ມູນ, ເອກະສານຕ່າງໆ ກ່ຽວກັບການຕິດຕາມ ກວດກາໂຄງການ; ຕອບ ແລະອະທິບາຍບັນຫາຕ່າງໆ ທີ່ຄະນະຕິດຕາມ ກວດກາມີຄວາມສົນໃຈ;

4. ປະສານສົມທົບກັບຜູ້ປະຕິບັດໂຄງການ ລົງຕິດຕາມ ກວດກາໂດຍກົງຕໍ່ໜ້າວຽກໃດໜຶ່ງຂອງໂຄງການທີ່ເຫັນວ່າມີຄວາມສຳຄັນ ແລະຈຳເປັນ;

5. ສະເໜີໃຫ້ອົງການຈັດຕັ້ງ ແລະບຸກຄົນທີ່ກ່ຽວຂ້ອງລວມທັງການຈັດຕັ້ງ ແລະບຸກຄົນຢູ່ຮາກຖານບ່ອນໂຄງການຕັ້ງຢູ່ ລາຍງານສະພາບການ ແລະສະໜອງຂໍ້ມູນ, ຂ່າວສານ ແລະເອກະສານ ຕ່າງໆທີ່ພົວພັນກັບການປະຕິບັດໂຄງການ;

6. ເຂົ້າຮ່ວມກອງປະຊຸມຂອງເຈົ້າຂອງໂຄງການ ຫຼື ຜູ້ປະຕິບັດໂຄງການ ທີ່ຈັດຂຶ້ນແຕ່ລະຄັ້ງ;

7. ໄດ້ຮັບການອຳນວຍຄວາມສະດວກໃນເມື່ອລົງປະຕິບັດໜ້າທີ່ຢູ່ພື້ນທີ່ຕ່າງໆ ບ່ອນໂຄງການຕັ້ງຢູ່ ເພື່ອດຳເນີນການຕິດຕາມ ກວດກາໂຄງການຢ່າງໃກ້ຊິດ ແລະເປັນປົກກະຕິ;

8. ສະຫຼຸບລາຍງານຜົນຂອງການຕິດຕາມ ກວດກາໃຫ້ຂັ້ນເທິງຂອງຕົນເປັນປົກກະຕິ ເພື່ອມີທິດຊີ້ນຳ ແລະ ພິຈາລະນາແກ້ໄຂຜົນຂອງການຕິດຕາມ ກວດກາທັນເວລາ;

9. ມອບສຳນວນເອກະສານທັງໝົດໃຫ້ອົງການກວດກາລັດໃນຂັ້ນຂອງຕົນ;

10. ນຳໃຊ້ສິດ ແລະປະຕິບັດໜ້າທີ່ອື່ນ ຕາມທີ່ໄດກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງການຈັດຕັ້ງຂັ້ນເທິງ

## ໝວດທີ 4
## ສິດ ແລະ ພັນທະ ຂອງຜູ້ປະຕິບັດໂຄງການທີ່ຖືກຕິດຕາມ ກວດກາ

**ມາດຕາ 13 ສິດຂອງຜູ້ປະຕິບັດໂຄງການລົງທຶນຂອງລັດ**

ຜູ້ປະຕິບັດໂຄງການລົງທຶນຂອງລັດມີສິດ ດັ່ງນີ້:

1. ສະເໜີໃຫ້ຄະນະຕິດຕາມ ກວດກາແຈ້ງຂໍ້ຕົກລົງ ກ່ຽວກັບການຕິດຕາມ ກວດກາ ແລະ ແຜນການຕິດຕາມ ກວດກາໃຫ້ຕົນຊາບ;

2. ອະທິບາຍ, ຊີ້ແຈງບັນຫາທີ່ພົວພັນເຖິງເນື້ອໃນຂອງການຕິດຕາມ ກວດກາ;

3. ເຂົ້າຮ່ວມຕິດຕາມ ກວດກາ ແລະເຂົ້າຮ່ວມປະຊຸມປຶກສາຫາລື ເພື່ອຄົ້ນຄວ້າພິຈາລະນາ ຜົນການຕິດຕາມ ກວດກາ ແລະການແກ້ໄຂບັນຫາທີ່ເຫັນວ່າເປັນການລະເມີດ;

4. ປະກອບຄຳເຫັນຕໍ່ບົດສະຫຼຸບຜົນການຕິດຕາມ ກວດກາ ແລະສະເໜີໃຫ້ຄະນະຕິດຕາມ ກວດກາພິຈາລະນາປັບປຸງແກ້ໄຂບົດສະຫຼຸບຜົນການຕິດຕາມ ກວດກາ ຖ້າຫາກເຫັນວ່າບໍ່ຖືກຕ້ອງ, ບໍ່ຊັດເຈນ ແລະບໍ່ຖືກກັບຄວາມຈິງ;

5. ລາຍງານຕໍ່ການຈັດຕັ້ງຂັ້ນເທິງ ທີ່ກ່ຽວຂ້ອງກ່ຽວກັບການປະພຶດ, ການປະຕິບັດໜ້າທີ່ ທີ່ບໍ່ຖືກຕ້ອງ ຂອງຄະນະຕິດຕາມ ກວດກາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ;

6. ສະໜີໃຫ້ຊົດເຊີຍຄວາມເສຍຫາຍທີ່ຕົນໄດ້ຮັບຈາກການຕິດຕາມ ກວດກາ ທີ່ບໍ່ຖືກຕ້ອງ ຫຼື ຮ້ອງຟ້ອງຕາມກົດໝາຍ ແລະລະບຽບການ;

7. ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ.

**ມາດຕາ 14 ພັນທະ ຂອງຜູ້ປະຕິບັດໂຄງການລົງທຶນຂອງລັດ**

ຜູ້ປະຕິບັດໂຄງການລົງທຶນຂອງລັດມີພັນທະ ດັ່ງນີ້:

1. ປະຕິບັດຕາມຂໍ້ຕົກລົງ ກ່ຽວກັບການຕິດຕາມ ກວດກາ, ສະໜອງຂໍ້ມູນ, ຫຼັກຖານ, ເອກະສານຢ່າງຄົບຖ້ວນ, ຊັດເຈນ ແລະທັນເວລາຕາມການສະເໜີຂອງຄະນະຕິດຕາມ ກວດກາ ແລະຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບຂໍ້ມູນທີ່ຕົນໄດ້ສະໜອງໃຫ້;

2. ສ້າງເງື່ອນໄຂ, ອຳນວຍຄວາມສະດວກໃຫ້ແກ່ຄະນະຕິດຕາມ ກວດກາໄດ້ເຄື່ອນໄຫວຢ່າງເປັນປົກກະຕິ ແລະຢ່າງໃກ້ຊິດຢູ່ພື້ນທີ່ຂອງໂຄງການ;

3. ປະຕິບັດຕາມການສະເໜີ, ການຕົກລົງກ່ຽວກັບການແກ້ໄຂຜົນຂອງການຕິດຕາມ ກວດກາ ຂອງຄະນະຕິດຕາມ ກວດກາ ແລະການຈັດຕັ້ງທີ່ກ່ຽວຂ້ອງ;

4. ພາຍຫຼັງໄດ້ປັບປຸງ, ແກ້ໄຂຜົນການຕິດຕາມ ກວດກາແລ້ວ ຕ້ອງລາຍງານໃຫ້ຄະນະຕິດຕາມ ກວດກາ ແລະການຈັດຕັ້ງທີ່ກ່ຽວຂ້ອງ;

5. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 15 ຂໍ້ຫ້າມສຳລັບຄະນະຕິດຕາມ ກວດກາ**

ຫ້າມພະນັກງານກວດກາທີ່ຖືກແຕ່ງຕັ້ງມອບໝາຍໃຫ້ປະຕິບັດໜ້າທີ່ຕິດຕາມ ກວດກາ ມີພຶດຕິກຳ ດັ່ງນີ້:

1. ປະຕິບັດໜ້າທີ່, ຄວາມຮັບຜິດຊອບໃນການຕິດຕາມ ກວດກາເກີນຂອບເຂດຂອງຂໍ້ຕົກລົງ ຫຼືລະເມີດກົດໝາຍ, ລະບຽບການ ກ່ຽວກັບການກວດກາ;

2. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດ ເພື່ອຫາຜົນປະໂຫຍດຂອງຕົນ, ຍາດພີ່ນ້ອງ ແລະ ພັກພວກ;

3. ບັງຄັບ, ນາບຂູ່ ຜູ້ປະຕິບັດໂຄງການ;

4. ພົວພັນ, ສົມຮູ້ຮ່ວມຄິດ ແລະວາງແຜນການຮ່ວມກັບຜູ້ປະຕິບັດໂຄງການ ເພື່ອດັດແປງ ປອມແປງ, ປຸ່ງແປງ, ເຊື່ອງອຳ, ປົກປິດການກະທຳຜິດ ຫຼື ບັນຫາໃດໜຶ່ງຂອງໂຄງການ ເພື່ອມີຜົນປະໂຫຍດຮ່ວມກັນ;

5. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ, ລະບຽບການ.

**ມາດຕາ 16 ຂໍ້ຫ້າມ ສຳລັບຜູ້ປະຕິບັດໂຄງການລົງທຶນຂອງລັດ**

ຫ້າມຜູ້ປະຕິບັດໂຄງການລົງທຶນຂອງລັດ ມີພຶດຕິກຳ ດັ່ງນີ້:

1. ສະແດງພຶດຕິກຳທີ່ເປັນການຂັດຂວາງການຕິດຕາມ ກວດກາ;

2. ສະໜອງຂໍ້ມູນ, ຫຼັກຖານທາງດ້ານເອກະສານກ່ຽວກັບໂຄງການທີ່ບໍ່ຖືກຕ້ອງກັບຄວາມຈິງ;

3. ດັດແປງສັນຍາຮັບເໝົາໂຄງການ, ດັດແປງແບບ, ດັດແປງມາດຕະຖານເຕັກນິກໂຄງການ; ເພີ່ມ ຫຼື ຫຼຸດບໍລິມາດວຽກ, ເພີ່ມມູນຄ່າຂອງໂຄງການ ໂດຍບໍ່ໄດ້ຮັບການອະນຸຍາດຈາກການຈັດຕັ້ງທີ່ມີສິດຕົກລົງ ທີ່ກ່ຽວຂ້ອງ;

4. ທວງເອົາ, ໃຫ້, ຫຼື ຮັບສິນບົນ ເພື່ອຫາຜົນປະໂຫຍດສ່ວນຕົວ;

5. ຂໍ້ຫ້າມອື່ນທີ່ກຳນົດໄວ້ໃນ ມາດຕາ 62, 63, 64 ແລະ65 ຂອງກົດໝາຍ ວ່າດ້ວຍການລົງທຶນຂອງລັດ;

6. ມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບ, ກົດໝາຍ.

## ໝວດທີ 6
## ການພິຈາລະນາແກ້ໄຂຜົນຂອງການຕິດຕາມ ກວດກາ

**ມາດຕາ 17 ອົງການທີ່ມີສິດພິຈາລະນາແກ້ໄຂຜົນຂອງການຕິດຕາມ ກວດກາ**

ອົງການທີ່ມີສິດພິຈາລະນາແກ້ໄຂຜົນຂອງການຕິດຕາມ ກວດກາແມ່ນການຈັດຕັ້ງທີ່ອອກຂໍ້ຕົກລົງໃຫ້ດຳເນີນການຕິດຕາມ ກວດກາ ໂຄງການລົງທຶນຂອງລັດແຕ່ລະຂັ້ນ; ອົງການ ຫຼື ຜູ້ມີສິດຊີ້ຂາດໃນການຄຸ້ມຄອງໂຄງການນັ້ນ.

**ມາດຕາ 18 ການພິຈາລະນາແກ້ໄຂຜົນຂອງການຕິດຕາມ ກວດກາ**

ອົງການທີ່ມີສິດພິຈາລະນາແກ້ໄຂ ຕ້ອງຄົ້ນຄວ້າພິຈາລະນາແກ້ໄຂ ແລະໃຫ້ການຊີ້ນຳແກ້ໄຂຜົນຂອງການຕິດຕາມ ກວດກາ ພາຍໃນສິບຫ້າວັນ ນັບແຕ່ວັນໄດ້ຮັບບົດສະຫຼຸບຜົນຂອງການຕິດຕາມ ກວດກາເປັນຕົ້ນໄປ. ພາຍຫຼັງການຕົກລົງແລ້ວ ຕ້ອງແຈ້ງໃຫ້ຜູ້ປະຕິບັດໂຄງການຊາບຊ້າ ສຸດບໍ່ເກີນເຈັດວັນ ເພື່ອດຳເນີນການແກ້ໄຂຜົນຂອງການຕິດຕາມ ກວດກາໃຫ້ຖືກຕ້ອງ, ເຂັ້ມງວດ ແລະທັນການ.

**ມາດຕາ 19 ການແກ້ໄຂຜົນ ຂອງການຕິດຕາມ ກວດກາ**

ການແກ້ໄຂຜົນຂອງການຕິດຕາມ ກວດກາ ໃຫ້ປະຕິບັດດັ່ງນີ້:

1. ເມື່ອເຫັນວ່າການຈັດຕັ້ງປະຕິບັດໂຄງການ ຈະແມ່ນຂອດໃດ ຫຼື ວຽກໃດກໍຕາມ ຫາກດຳເນີນໄປບໍ່ຖືກຕ້ອງຕາມກົດໝາຍ ແລະລະບຽບການ ການລົງທຶນຂອງລັດ ຕ້ອງປຶກສາຫາລືສະເໜີໃຫ້ຜູ້ປະຕິບັດໂຄງການດັດແປງແກ້ໄຂແຕ່ຫົວທີໃຫ້ຖືກຕ້ອງຕາມກົດໝາຍ ແລະລະບຽບການ ແລ້ວຈຶ່ງຈັດຕັ້ງປະຕິບັດໂຄງການ;

2. ຕະຫຼອດໄລຍະຈັດຕັ້ງປະຕິບັດໂຄງການ ຜູ້ປະຕິບັດໂຄງການຫາກດຳເນີນໄປບໍ່ຖືກຕ້ອງຕາມສັນຍາຮັບເໝົາໂຄງການ ຈະແມ່ນກໍລະນີໃດກໍຕາມ ລວມທັງການດັດແປງເອກະສານຕ່າງໆ ທີ່ກ່ຽວຂ້ອງກັບໂຄງການ, ດັດແປງຮູບແບບ, ມາດຕະຖານເຕັກນິກ, ໜ້າວຽກ, ການສວຍໃຊ້ໜ້າທີ່ຕຳແໜ່ງ ແລະອື່ນໆ ລ້ວນແຕ່ຕ້ອງດຳເນີນການກວດກາລົງເລິກ ແລະມີການແກ້ໄຂຢ່າງເຂັ້ມງວດ ຕາມກົດໝາຍ ແລະລະບຽບການ;

3. ໂຄງການລົງທຶນຂອງລັດ ທີ່ເຫັນວ່າປະສິດທິຜົນບໍ່ສູງ ຈະມີຜົນກະທົບຕໍ່ສະພາບແວດລ້ອມທາງທຳມະຊາດ ແລະສັງຄົມຮ້າຍແຮງ, ແຕະຕ້ອງປູສະນີຍະສະຖານ, ວັດຖຸບູຮານ, ແຕະຕ້ອງເຖິງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ມີຄວາມສ່ຽງຕໍ່ການປົກປ້ອງຜົນປະໂຫຍດລວມຂອງຊາດ ຂອງລວມໝູ່ ແລະຂອງປະຊາຊົນ, ອົງການ ຫຼື ຄະນະຕິດຕາມ ກວດກາຕ້ອງສະຫຼຸບລາຍງານ ແລະສະເໜີຕໍ່ອົງການທີ່ກ່ຽວຂ້ອງ ແລະຂັ້ນເທິງພິຈາລະນາແກ້ໄຂຕາມສະພາບຄວາມເປັນຈິງ ແລະຕາມກົດໝາຍ ແລະລະບຽບການ;

4. ກໍລະນີອົງການ ຫຼື ຄະນະຕິດຕາມ ກວດກາສະເໜີໃຫ້ຜູ້ປະຕິບັດໂຄງການດັດແປງແກ້ໄຂບັນຫາຕ່າງໆ ທີ່ເຫັນວ່າຂັດຕໍ່ກົດໝາຍ, ລະບຽບການ, ບໍ່ຖືກຕ້ອງຕາມສັນຍາ ແລະອື່ນໆ, ຜູ້ປະຕິບັດໂຄງ

ການຫາກບໍ່ປະຕິບັດຕາມ: ຄັ້ງທຳອິດຈະຖືກຕັກເຕືອນ, ຄັ້ງທີສອງ ຈະໃຫ້ໂຈະການດຳເນີນກິດຈະການຊົ່ວຄາວ ແລະຄັ້ງທີສາມ ສະເໜີຍົກເລີກ ຫຼື ຢຸດເຊົາໂຄງການ ແລະດຳເນີນຕາມກົດໝາຍ.

**ມາດຕາ 20 ງົບປະມານ**

ງົບປະມານສຳລັບການເຄື່ອນໄຫວວຽກງານຕິດຕາມ ກວດກາເລີ່ມແຕ່ທ້ອງທີ່ ໃຫ້ຂຶ້ນແຜນໄວ້ໃນງົບປະມານຂອງໂຄງການ.

ມອບໃຫ້ອົງການກວດກາລັດຖະບານ, ກະຊວງແຜນການ ແລະການລົງທຶນ ແລະກະຊວງການເງິນ ຄົ້ນຄວ້າອອກລະບຽບການລະອຽດ ໃນການປະຕິບັດຕົວຈິງ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 21 ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການກວດກາລັດຖະບານ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້ ແລະປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 22 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງສິງ ທຳມະວົງ